# *** ຄູ່ມືຊ່ວຍໃນການຕັດສິນໃຈ ສຳລັບ ຊາວກະສິກອນຜູ້ທີ່ມີຄວາມສົນໃຈຢາກຈະປູກໝາກເຢົາ ***

**ວິທີການນຳໃຊ້ຄູ່ມື:**

ສາມວັດຖຸປະສົງຫຼັກສຳຄັນຢູ່ໃນຄູ່ມືເຫຼັ້ມນີ້ແມ່ນກ່ຽວຂ້ອງກັບ **ທີ່ດິນ, ແຮງງານ ແລະ ທຶນ** ທີ່ພົວພັນເຖິງສະພາບການຜະລິດຂອງທ່ານ. ເພື່ອຢາກຮູ້ວ່າໝາກເຢົາເປັນພືດທີ່ເໝາະສົມສຳລັບທ່ານບໍ່?, ນັ້ນໝາຍຄວາມວ່າ, ທ່ານກໍ່ເລີ້ມຕົ້ນມີຄຳຖາມກັບຕົວເອງ **1. ຄຳຖາມແລ້ວ**. ເພື່ອເປັນຊອກຄຳຕອບຂອງທ່ານ, ໃຫ້ພວກທ່ານເບິ່ງໄປຕາມລວງຂອງລູກສອນ ແລະ ຕອບຄຳຖາມຕໍ່ເນື່ອງໄປເລື້ອຍໆ. ທາງເລືອກທີ່ເປັນໄປໄດ້ສາມທາງ **ກ, ຂ ແລະ ຄ** ແມ່ນບັນດາຂໍ້ແນະນຳ ແລະ ບໍ່ແມ່ນຂໍ້ບັງຄັບ ເຊິ່ງຈຳເປັນຕ້ອງໄດ້ທຳຄວາມເຂົ້າໃຈຈາກຄູ່ມືການຝຶກອົບຮົມໂດຍອີງໃສ່ທາງເລືອກທີ່ທ່ານສົນໃຈພາຍຫຼັງທີ່ທ່ານໄດ້ນຳໃຊ້ຄູ່ມືເຫຼັ້ມນີ້.

**ໃຫ້ທ່ານໃຊ້ເວລາຄິດ ຕາມຄຳຖາມ ແລະ ຄຳຕອບຕ່າງໆ ເພື່ອຮັບປະກັນວ່າທ່ານໄດ້ຕັດສິນໃຈເລືອກ ທາງເລືອກທີ່ຖືກຕ້ອງແລ້ວ!**



## ໝາກເຍົາແມ່ນຫຍັງ ?

ໝາກເຍົາແມ່ນພືດທີ່ໃຫ້ຜົນຜະລິດແກ່ນທີ່ປະກອບດ້ວຍນ້ຳມັນໃນປະລິມານສູງ, ໂດຍລຳຕົ້ນ ແລະ ແກ່ນຂອງມັນ, ຄົນ ແລະ ສັດບໍ່ສາມາດກິນໄດ້. ແກ່ນໝາກເຍົາເປັນຜະລິດຕະພັນຫຼັກສຳຄັນທີ່ຖືກນຳໃຊ້ ເພື່ອສະກັດເອົານ້ຳມັນຂອງມັນ.

**ທ່າແຮງຂອງຕົ້ນໝາກເຍົາ**:

ໝາກເຍົາສາມາດປູກໄດ້ດ້ວຍການປັກຊຳ ແລະ ຈາກເບ້ຍ ໂດຍສະເພາະຖ້າປູກຫມາກເຍົາເປັນຮົ້ວອ້ອມສວນ, ອ້ອມທາງ ຫລື ອ້ອມເຮືອນ ຖືວ່າເປັນວຽກທີ່ບໍ່ຫຍຸ້ງຍາກພໍປານໃດ. ບັນດາທ່າແຮງຂອງຕົ້ນຫມາກເຍົາມີດັ່ງນີ້:

- ຕົ້ນໝາກເຍົາສາມາດມີອາຍຸເຖິງ 15-20 ປີ ແລະ ໃຫ້ຜົນຜະລິດແກ່ນໄດ້ທຸກໆປີ
- ຕົ້ນໝາກເຍົາສາມາດຈະເລີນເຕີບໂຕໄດ້ໃນຫຼາຍໆພື້ນທີ່ (ດິນບໍ່ງາມ, ການບຳລຸງຮັກສາບໍ່ຍາກ)

**ບັນດາຂໍ້ຈຳກັດຂອງໝາກເຍົາ**:

ມາເຖິງປັດຈຸບັນຂໍ້ມູນ ແລະ ປະສົບປະການກ່ຽວກັບຫມາກເຍົາຍັງມີຈຳກັດ ໂດຍສະເພາະຂໍ້ມູນທາງດ້ານຜົນຜະລິດຕໍ່ຕົ້ນ ແລະ ຜົນຕອບແທນທາງການເງິນຢ່າງຄຸ້ມຄ່າໃຫ້ແກ່ຊາວກະສິກອນ.

- ອາດຈະຂາດທຶນ ເນື່ອງຈາກໝາກເຍົາບໍ່ໃຫ້ຜົນຜະລິດ.
- ຂາດປະສົບປະການ ແລະ ບໍ່ມີຕະຫຼາດຈຳໜ່າຍແກ່ນຫມາກເຍົາ.
- ໃຊ້ເວລາ 2-3 ປີ ຫມາກເຍົາຈຶ່ງຈະເລີນເຕີບໂຕເຕັມທີ່ ແລະ ໃຫ້ຜົນຜະລິດ.

# ຄິດກ່ອນຈະຕັດສິນໃຈລົງມືປູກໝາກເຍົາ!




**ສູນຄົ້ນຄວ້າ-ທົດລອງພະລັງງານທົດແທນລາວ**

ຖະໜົນໂສກປ່າຫຼວງ, ເມືອງສີສັດຕະນາກ
ນະຄອນຫຼວງວຽງຈັນ, ສ ປປ ລາວ
ຕູ້.ປ. ນ 8010
ໂທລະສັບ:+856 21 353430; ແຟັກ: +856 21 314045
ອີເມລ: contact@lao-ire.org
Web: www.lao-ire.org

**ໂຄງການສົ່ງເສີມກະສິກຳ**

ສຳນັກງານ: NAFES, ບ້ານ ດ່ານຊ້າງ,
ເມືອງໄຊທານີ, ນະຄອນຫຼວງວຽງຈັນ,
ສປປ.ລາວ
ຕູ້ ປ.ນ 9159
ໂທ/ແຟັກ: 021-740 253
ອີເມລ: linkages@laoex.org
Web: www.Laoex.org